# ທະນາຄານແຫ່ງ ສປປ ລາວ ສຳເລັດການບຳລຸງທິດສະດີການເມືອງ ໃຫ້ແກ່ພະນັກງານ




ໃນທ້າຍສັບດາຜ່ານມານີ້ ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ສຳເລັດການຝຶກອົບຮົມ "ທິດສະດີການເມືອງຂັ້ນຕົ້ນ-ວຽກງານຈັດຕັ້ງ" ຊຸດທີIVໃຫ້ແກ່ພະນັກງານໂດຍການເປັນກຽດເຂົ້າຮ່ວມເປັນປະທານຂອງສະຫາຍ ພູເພັດ ຄຳພູນວົງ ເລຂາຄະນະພັກ, ຜູ້ວ່າການ ທຫລ, ບັນດາຜູ້ຕາງໜ້າຄະນະໂຄສະນາອົບຮົມສູນກາງພັກ-ຄະນະຈັດຕັ້ງສູນກາງພັກ, ບັນດາຄະນະຜູ້ວ່າການ ທຫລ, ຄະນະກົມ-ຄະນະອຳນວຍການທຸລະກິດ/ຫຸ້ນສ່ວນ, ບັນດາອາຈານນັກສຶກສາເຂົ້າຮ່ວມຢ່າງພ້ອມພຽງ.

ສະຫາຍ ຄຳວົງ ທິບພະວົງ ຄະນະພັກ ທຫລ-ຫົວໜ້າກົມຈັດຕັ້ງ ແລະ ພະນັກງານ ທຫລ ໄດ້ຍືນຢັນຄືນໝາກຜົນແຫ່ງການເຄື່ອນໄຫວການຮຽນ-ການສອນ ໃນຕະຫລອດສາມເດືອນຜ່ານມາຄືນັບແຕ່ ວັນທີ 8 ມິຖຸນາ ຫາວັນທີ 18 ກັນຍາ 2009 ເຊິ່ງມີບັນດາພະນັກງານຫລັກແຫລ່ງ-ວິຊາການເຂົ້າຮຽນ 36 ສະຫາຍ ໃນນີ້ມາຈາກ ທຫລ 21 ສະຫາຍ, ທະນາຄານທຸລະກິດລັດ 15 ສະຫາຍ ເຊິ່ງຢູ່ອອ້ມຂ້າງສູນກາງ 32 ສະຫາຍ ແລະ ມາຈາກທ້ອງຖິ່ນ 14 ສະຫາຍ.

ອ້າງອີງຈາກໜັງສືພິມ ປະຊາຊົນ, ສະບັບວັນທີ 22 ກັນຍາ 2009

ຜ່ານການຝຶກອົບຮົມໃນຄັ້ງນີ້ສາມາດຢືນຢັນ ແລະ ກວດກາສັງລວມຄະແນນສອບເສັງທັງສອງພາກ (ຂຽນ-ປາກເວົ້າ) ສາມາດບັນລຸຄະແນນ 9 ຂຶ້ນໄປ 11 ສະຫາຍ, ຄະແນນ 8-9 ຈຳນວນ 25 ສະຫາຍ.

ສະຫາຍເລຂາຄະນະພັກ ທຫລ ໄດ້ຕີລາຄາສູງຕໍ່ຄວາມພະຍາຍາມຂອງບັນດາຄະນະຮັບຜິດຊອບ, ບັນດາອາຈານ ແລະ ນັກສຶກສາທີ່ໄດ້ອົດທົນຜ່ານຜ່າ ແລະ ສາມາດຍາດໄດ້ຜົນສຳເລັດອັນສະຫງ່າງາມ ພ້ອມດຽວກັນສະຫາຍກໍ່ໄດ້ຮຽກຮ້ອງໃຫ້ບັນດາສະຫາຍທີ່ສຳເລັດການຝຶກອົບຮົມໃນຄັ້ງນີ້ຈົ່ງພ້ອມກັນນຳເອົາບົດຮຽນເຂົ້າໝູນໃຊ້ເຂົ້າໃນວຽກງານຕົວຈິງ ແລະ ກໍ່ສະເໜີໃຫ້ຄະນະໜ່ວຍພັກ, ຄະນະຮາກຖານ, ອຳນາດການປົກຄອງຄົ້ນຄ້ວາ ແລະ ຈັດຕັ້ງປະຕິບັດກ່ຽວກັບການປັບປຸງການຈັດຕັ້ງຂອງຕົນໃຫ້ໜັກແໜ້ນ-ເຂັ້ມແຂງ, ກະທັດລັດແກ້ໄຂບໍ່ໃຫ້ມີສະພາບຄົນເຫລືອບໍ່ພໍ, ສະນັ້ນກໍ່ຕ້ອງເພີ່ມທະວີວຽກງານການເມືອງແນວຄິດ, ເອົາໃຈໃສ່ວຽກງານ ກໍ່ ສ້າງຂະຫຍາຍພັກ ແລະ ສືບຕໍ່ກໍ່ສ້າງໜ່ວຍພັກແຂງຮູ້ນຳພາຮອບດ້ານໃຫ້ບັນລຸຜົນດີ.

ອ້າງອີງຈາກໜັງສືພິມ ປະຊາຊົນ, ສະບັບວັນທີ 22 ກັນຍາ 2009